ສຳນັກງານໃຫຍ່

ເລກທີ: 031 /ທຄຕລ.ສພບ.2026.
ນະຄອນຫຼວງວຽງຈັນ, ວັນທີ: 17 ມິຖຸນາ 2026

ມະຕິ

ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ

ຄັ້ງທີ 02 ປະຈຳປີ 2026, ວັນທີ 17/06/2026

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ຄັ້ງທີ 02 ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00-11:15 ໂມງ ຂອງວັນທີ 17/06/2026 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈຸມຄຳ ປະທານສະພາບໍລິຫານຂອງ ທຄຕລ. ມີສະມາຊິກສະພາບໍລິຫານຈຳນວນ 07 ທ່ານ ເຂົ້າຮ່ວມ (ໃນນີ້ ມີກຳມະການສະພາບໍລິຫານຈຳນວນ 01 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານນາງ ລັດດາວັນ ຊົງວິໄລ), ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1) ຮັບຮອງນະໂຍບາຍ ວ່າດ້ວຍ ການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງຂອງ ທຄຕລ;
2) ຮັບຮອງນະໂຍບາຍ ວ່າດ້ວຍ ການໃຊ້ບໍລິການຈາກພາຍນອກ (Outsourcing) ຂອງ ທຄຕລ;
3) ຮັບຮອງການສະເໜີຂໍກູ້ຢືມເງິນຂອງລູກຄ້າບໍລິສັດຈຳນວນ 02 ລາຍການ ທີ່ຂຶ້ນກັບສິດຂອງສະພາບໍລິຫານ;
4) ຮັບຮອງການປັບປຸງກົດລະບຽບຂອງສະພາບໍລິຫານ ທຄຕລ;
5) ຮັບຮອງລະບຽບ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງ ທຄຕລ (ສະບັບເລກທີ 006/ທຄຕລ.2024);
6) ຮັບຮອງການປັບປຸງນະໂຍບາຍສຳລັບພະນັກງານທີ່ລົງທ້ອງຖິ່ນ;
7) ຮັບຮອງບໍລິສັດປະເມີນຊັບສິນ ທີ່ມີສັນຍາບໍລິການປະເມີນຊັບສິນກັບ ທຄຕລ.

ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ